ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1976 /ອຄ.ກຂອ
ນະຄອນຫຼວງວຽງຈັນ, ວັນທີ 06 ຫຼາ ລາ 2010

# ຂໍ້ຕົກລົງ

## ວ່າດ້ວຍການຂາຍໄມ້ ແລະ ການເຄື່ອນຍ້າຍໄມ້ ພາຍໃຕ້ມາດຕະຖານ ຂອງສະພາບໍລິຫານປ່າໄມ້ສາກົນ (FSC)

– ອີງຕາມດຳລັດ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006 ວ່າດ້ວຍການຈັດຕັ້ງເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ;
– ອີງຕາມດຳລັດ ສະບັບເລກທີ 59/ນຍ, ລົງວັນທີ 22 ພຶດສະພາ 2002 ວ່າດ້ວຍການຄຸ້ມຄອງປ່າຜະລິດແບບຍືນນານ;
– ອີງຕາມຄຳສັ່ງ ສະບັບເລກທີ 17/ນຍ, ລົງວັນທີ 22 ກັນຍາ 2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ I
## ຫຼັກການທົ່ວໄປ

ມາດຕາ 1. **ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອສົ່ງເສີມການຜະລິດ ແລະ ການສົ່ງອອກຜະລິດຕະພັນອຸດສາຫະກຳປຸງແຕ່ງໄມ້ ພາຍໃຕ້ມາດຕະຖານ ຂອງສະພາບໍລິຫານປ່າໄມ້ສາກົນ (FSC) ທັງເພື່ອເປັນການປະກອບສ່ວນເຂົ້າໃນການປົກປັກຮັກສາປ່າໄມ້ແບບຍືນຍົງ ເຮັດໃຫ້ທຸລະກິດໄມ້ກາຍເປັນທ່າແຮງ ໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

ມາດຕາ 2. **ຫຼັກການ ຂອງການນຳໃຊ້ (FSC)**

ຜູ້ດຳເນີນທຸລະກິດກ່ຽວກັບໄມ້ (ພາຍໃນ ຫຼື ຕ່າງປະເທດ) ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຖືກຕ້ອງ ຕາມລະບຽບກົດໝາຍ ຂອງ ສປປ ລາວ ທີ່ມີຄວາມປະສົງຢາກໄດ້ຮັບການຢັ້ງຢືນ ຈາກສະພາບໍລິຫານປ່າໄມ້ສາກົນ (FSC) ຕ້ອງປະຕິບັດຕາມເງື່ອນໄຂມາດຕະຖານ ຂອງສະພາບໍລິຫານດັ່ງກ່າວ ຢ່າງເຂັ້ມງວດ;

ການນຳໃຊ້ມາດຕະຖານ ຂອງສະພາບໍລິຫານປ່າໄມ້ສາກົນ ດັ່ງທີ່ກ່າວໃນ ວັກໜຶ່ງ ເທິງນີ້ ແມ່ນບົນພື້ນຖານຄວາມສະໝັກໃຈ ຂອງຜູ້ດຳເນີນທຸລະກິດກ່ຽວກັບໄມ້.

ມາດຕາ 3. **ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

ສະພາບໍລິຫານປ່າໄມ້ສາກົນ (Forest Stewardship Council ຫລື "FSC") ແມ່ນ ອົງການສົ່ງເສີມການຄຸ້ມຄອງປ່າໄມ້ສາກົນ ທີ່ບໍ່ແມ່ນອົງການຈັດຕັ້ງຂອງລັດຖະບານ;

ລະບົບການຄວບຄຸມໄມ້ແບບຕ່ອງໂສ້ (Chain of Custody System ຫລື "CoC") ແມ່ນຂະບວນການຄຸ້ມຄອງໄມ້ຈາກປ່າຜະລິດ ແລະ ປ່າປູກ ທີ່ໄດ້ຮັບການຢັ້ງຢືນຂອງ FSC ເລີ່ມຈາກການຂຸດຄົ້ນ, ການເຄື່ອນຍ້າຍ, ການປຸງແຕ່ງ ແລະ ການຈຳໜ່າຍ;

ເຄື່ອງໝາຍ (FSC pure) ແລະ (FSC controlled wood) ແມ່ນເຄື່ອງໝາຍ ຂອງສະພາບໍລິຫານປ່າໄມ້ສາກົນ ທີ່ໃຊ້ສະແດງເຖິງໄມ້ ທີ່ໄດ້ຂຸດຄົ້ນອອກຈາກປ່າຜະລິດ ທີ່ໄດ້ຮັບການຈັດສັນແບບຍືນຍົງຕາມຫຼັກການ ຂອງ FSC.

## ໝວດທີ II
## ວິທີການຂາຍໄມ້ ພາຍໃຕ້ມາດຕະຖານ ຂອງ FSC

ມາດຕາ 4. **ວິທີການຂາຍໄມ້ຈາກປ່າຜະລິດ**

ການຂາຍໄມ້ຈາກປ່າຜະລິດ ຕ້ອງດຳເນີນການຂາຍດ້ວຍຮູບການປະມູນແບບເປີດກວ້າງ ເປັນໄມ້ຢືນຕົ້ນ ຫຼື ໄມ້ທ່ອນ ຢູ່ສະໜາມ II ທີ່ຂຸດຄົ້ນຈາກປ່າຜະລິດ ທີ່ໄດ້ຮັບການຢັ້ງຢືນຕາມມາດຕະຖານຂອງສະພາບໍລິຫານປ່າໄມ້ສາກົນ (FSC).

ມາດຕາ 5. **ວິທີການຂາຍໄມ້ຈາກປ່າປູກ**

ການຂາຍໄມ້ຈາກປ່າປູກ ແມ່ນການຂາຍ ແລະ ການເຄື່ອນຍ້າຍໄມ້ ຈາກປ່າປູກຂອງລັດ, ລວມໝູ່, ພາກທຸລະກິດ ຫລື ປະຊາຊົນ ທີ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກຂະແໜງການ ທີ່ກ່ຽວຂ້ອງ.

ການຂາຍໄມ້ຈາກປ່າປູກ ດັ່ງທີ່ໄດ້ກ່າວໃນ ວັກໜຶ່ງ ຂອງມາດຕານີ້ ກໍສາມາດນຳໃຊ້ລະບົບການຂາຍໄມ້ ພາຍໃຕ້ມາດຕະຖານຂອງ FSC.

## ໝວດທີ III
## ການຄຸ້ມຄອງການເຄື່ອນຍ້າຍ ແລະ ການຂາຍໄມ້

### ມາດຕາ 6. ການຄຸ້ມຄອງການເຄື່ອນຍ້າຍໄມ້

ການຄຸ້ມຄອງການເຄື່ອນຍ້າຍໄມ້ ຈາກຈຸດຕັດປ້ຳ ຫາ ສະໜາມ II ແມ່ນປະຕິບັດຕາມບົດແນະນຳ ສະບັບເລກທີ 0962/ກປມ ລົງວັນທີ 9 ເມສາ 2010 ຂອງ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້.

ການຄຸ້ມຄອງການເຄື່ອນຍ້າຍໄມ້ທ່ອນ ຈາກສະໜາມ II ຫາ ໂຮງງານປຸງແຕ່ງໄມ້ ແມ່ນ ໃຫ້ປະຕິບັດຕາມແຈ້ງການ ສະບັບເລກທີ 1601/ອຄ.ກຂອ ລົງວັນທີ 29 ກັນຍາ 2008 ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳເພີ່ມເຕີມສະເພາະ ໃຫ້ສອດຄ່ອງກັບການຂາຍໄມ້ ແລະ ການເຄື່ອນຍ້າຍໄມ້ ດ້ວຍລະບົບການຄວບຄຸມໄມ້ແບບຕ່ອງໂສ້ ຈົນຮອດຂອດສົ່ງອອກ.

ໂຮງງານອຸດສາຫະກຳປຸງແຕ່ງໄມ້ ປະເພດ I ແລະ ປະເພດ II ຕ້ອງມີລະບົບການຄວບຄຸມໄມ້ແບບຕ່ອງໂສ້ ເປັນຂອງຕົນເອງ ເພື່ອສະແດງໃຫ້ເຫັນຄວາມຖືກຕ້ອງ ແຫຼ່ງທີ່ມາຂອງໄມ້ ຈາກສະໜາມ II.

### ມາດຕາ 7. ການຄຸ້ມຄອງການຂາຍໄມ້

ເພື່ອຮັບປະກັນ ບໍ່ໃຫ້ໄມ້ທ່ອນທີ່ຂຸດຄົ້ນອອກຈາກເຂດປ່າຜະລິດ ທີ່ບໍ່ໄດ້ຮັບການຢັ້ງຢືນ ມາປະປົນເຂົ້າກັບໄມ້ທ່ອນໄດ້ຮັບການຢັ້ງຢືນ, ເອກະສານການຂາຍ ແລະ ການເຄື່ອນຍ້າຍໄມ້ ຊຶ່ງນັບທັງໃບແຈ້ງລາຄາ ແລະ ໃບຮັບເງິນຈາກຜູ້ຊື້ ຈະຕ້ອງເຮັດແຍກອອກຕ່າງຫາກ;

ເອກະສານການຂາຍ ແລະ ການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ຮັບການຢັ້ງຢືນທັງໝົດ ຕ້ອງມີເລກລະຫັດ ແລະ ເຄື່ອງໝາຍ ຂອງສະພາບໍລິຫານປ່າໄມ້ສາກົນ (FSC Pure) ຫຼື (FSC controlled wood) ຕາມຄວາມຮຽກຮ້ອງຕ້ອງການ ຂອງຜູ້ອອກໃບຢັ້ງຢືນ ແລະ ຜູ້ຮັບໃບຢັ້ງຢືນ.

### ມາດຕາ 8. ການສຳເນົາເອກະສານການຂາຍໄມ້

ສຳເນົາເອກະສານ ກ່ຽວກັບແຫຼ່ງທີ່ມາຂອງໄມ້ ອອກໂດຍຂະແໜງກະສິກຳ ແລະ ປ່າໄມ້ ແລະ ສຳເນົາເອກະສານການຂາຍໄມ້ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງໄດ້ຮັກສາໄວ້ຢ່າງໜ້ອຍ 5 ປີ ເພື່ອນຳໃຊ້ເຂົ້າໃນຈຸດປະສົງຕ່າງໆ ໃນນີ້ແມ່ນເພື່ອເປັນບ່ອນອີງ ໃຫ້ແກ່ຜູ້ອອກໃບຢັ້ງຢືນ ແລະ ຜູ້ກວດສອບ ໃນການກວດສອບຄວາມຖືກຕ້ອງ ຕາມມາດຕະຖານຂອງ (FSC).

ໝວດທີ IV

ການຈັດຕັ້ງປະຕິບັດ

ມາດຕາ 9. **ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ, ກົມການຄ້າພາຍໃນ, ກົມອຸດສາຫະກຳ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນຜູ້ຈັດຕັ້ງປະຕິບັດ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ເພື່ອເຜີຍແຜ່ຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ;

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ຕ້ອງແຕ່ງຕັ້ງພະນັກງານຮັບຜິດຊອບສະເພາະວຽກງານ ຕາມຂໍ້ຕົກລົງສະບັບນີ້. ພະນັກງານດັ່ງກ່າວ ຕ້ອງໄດ້ຜ່ານການຝຶກອົບຮົມເພື່ອສ້າງຄວາມຮັບຮູ້ກ່ຽວກັບການຂາຍໄມ້ ແລະ ການເຄື່ອນຍ້າຍໄມ້ ພາຍໃຕ້ມາດຕະຖານ ຂອງສະພາບໍລິຫານປ່າໄມ້ສາກົນ (FSC).

ມາດຕາ 10. **ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດທີ່ຂັດກັບເນື້ອໃນຂອງຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ